ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມທົບທວນການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ແລະ ນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ




ໃນຕອນບ່າຍຂອງວັນທີ 8 ເມສາ 2026 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 6, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມຄະນະຮັບຜິດຊອບຊີ້ນຳລວມຈັດຕັ້ງປະຕິບັດ ນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ເພື່ອທົບທວນ ແລະ ຕີລາຄາ ການຈັດຕັ້ງປະຕິບັດ 2 ນະໂຍບາຍສິນເຊື່ອດັ່ງກ່າວ, ໂດຍການໃຫ້ກຽດເຂົ້າຮ່ວມ ແລະ ເປັນປະທານຂອງທ່ານ ນ. ບຸນຄຳ ວໍລະຈິດ ຜູ້ວ່າການ ທຫລ, ຫົວໜ້າຄະນະຊີ້ນຳລວມ, ມີບັນດາທ່ານ ຮອງລັດຖະມົນຕີ ຈາກບັນດາກະຊວງກ່ຽວຂ້ອງ, ຮອງປະທານຄະນະກຳມະການປົກຄອງແຂວງ ແລະ ນະຄອນ ຫຼວງວຽງຈັນ ທີ່ເປັນຄະນະຮັບຜິດຊອບຊີ້ນຳລວມ, ພ້ອມທັງ ບັນດາກົມກ່ຽວຂ້ອງຂອງ ທຫລ ເຂົ້າຮ່ວມຈຳນວນ 42 ທ່ານ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ກໍ່ແມ່ນເພື່ອເປັນການສະຫຼຸບ, ປະເມີນ ແລະ ຕີລາຄາຜົນການຈັດຕັ້ງປະຕິບັດ 2 ນະໂຍບາຍສິນເຊື່ອ ຕະຫຼອດໄລຍະຜ່ານມາ (ປີ 2023-2025) ເພື່ອຖອດຖອນບົດຮຽນ, ພ້ອມທັງ

ແລກປ່ຽນຄຳຄິດເຫັນ ກ່ຽວກັບທິດທາງໃນຕໍ່ໜ້າ ເພື່ອລາຍງານຄືນຜົນການຈັດຕັ້ງປະຕິບັດຕໍ່ລັດຖະບານຊາບ ພາຍຫຼັງຄົບກຳນົດເວລາການຈັດຕັ້ງປະຕິບັດ ນັບແຕ່ທ້າຍປີ 2025 ເປັນຕົ້ນມາ.



ທ່ານ ຜູ້ວ່າການ ທຫລ ໄດ້ຕີລາຄາສູງ ຕໍ່ຜົນການຈັດຕັ້ງປະຕິບັດ 2 ນະໂຍບາຍສິນເຊື່ອດັ່ງກ່າວ ຊຶ່ງຜ່ານການສະຫຼຸບສັງລວມການຈັດຕັ້ງປະຕິບັດໃນ 18 ແຂວງ ເຫັນວ່າ ມີໝາກຜົນ ໃນລະດັບດີພໍສົມຄວນ, ສະແດງອອກ ມີຫົວໜ່ວຍທຸລະກິດ ຈຳນວນ 1,350 ຫົວໜ່ວຍ ໃນ 18 ແຂວງ ໄດ້ຮັບການອະນຸມັດແຫຼ່ງທຶນກູ້ຢືມ ບ້ວງນະໂຍບາຍສິນເຊື່ອ ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ (ນະໂຍບາຍ 765/ທຫລ) ລວມວົງເງິນອະນຸມັດເບີກຖອນເງິນກູ້ຢືມທັງໝົດ 2,382.71 ຕື້ກີບ ແລະ ມີ 56 ຫົວໜ່ວຍ ໄດ້ເຂົ້າຮັບການສົມທົບ ດອກເບ້ຍໃນນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ (ນະໂຍບາຍ 766/ທຫລ) ຊຶ່ງເປັນເງິນກູ້ທັງໝົດຈາກແຫຼ່ງທຶນຂອງ ທະນາຄານທຸລະກິດ ຈຳນວນ 5,517.83 ຕື້ກີບ, ໃນນີ້ ວົງເງິນກູ້ຢືມຂອງທະນາຄານທຸລະກິດທີ່ມີເງື່ອນໄຂຮັບສົມທົບດອກເບ້ຍຈາກ ທຫລ ມີຈຳນວນ 3,644.14 ຕື້ກີບ ແລະ ທຫລ ໄດ້ຊຳລະດອກເບ້ຍສົມທົບໃຫ້ຫົວໜ່ວຍ ລວມທັງໝົດ 174.84 ຕື້ກີບ. ຜົນງານທີ່ຍາດມາໄດ້ ສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງຄະນະຮັບຜິດຊອບຊີ້ນຳລວມ ກໍຄືຄະນະຮັບຜິດຊອບຈັດຕັ້ງປະຕິບັດ, ບັນດາແຂວງ, ກະຊວງ, ທຫລ ແລະ ບັນດາທະນາຄານທຸລະກິດ ທີ່ເຂົ້າຮ່ວມການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ໄດ້ປະກອບສ່ວນຊຸກຍູ້ທາງດ້ານແຫຼ່ງທຶນ ແລະ ການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເຂົ້າຫາຫົວໜ່ວຍທຸລະກິດ.

ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຮັບຟັງການນຳສະເໜີ ແລະ ລາຍງານຜົນການຈັດຕັ້ງປະຕິບັດ 2 ນະໂຍບາຍສິນເຊື່ອກ່ຽວຂ້ອງ ແລະ ທິດທາງວຽກດັ່ງກ່າວໃນຕໍ່ໜ້າ ໂດຍຜູ້ຮັບຜິດຊອບຂອງກົມບໍລິການທະນາຄານ, ທຫລ ເປັນຜູ້ນຳສະເໜີເນື້ອໃນ ໃຫ້ໄດ້ຮັບຊາບ ແລະ ຍັງເປີດໂອກາດໃຫ້ຜູ້ຕາງໜ້າຈາກທຸກພາກສ່ວນ ປະກອບຄຳເຫັນຕໍ່ຜົນການຈັດຕັ້ງປະຕິບັດ 2 ນະໂຍບາຍສິນເຊື່ອດັ່ງກ່າວ, ພ້ອມທັງ ນຳສະເໜີທິດທາງໃນຕໍ່ໜ້າ ເພື່ອສະເໜີຕໍ່ກອງປະຊຸມ ພິຈາລະນາກ່ອນຈະສືບຕໍ່ລາຍງານຂໍທິດຊີ້ນຳຈາກລັດຖະບານໃນຂັ້ນຕໍ່ໄປ. ພ້ອມກັນນັ້ນ, ທີ່ປະຊຸມຍັງໄດ້ຮັບຟັງບົດນຳສະເໜີໂດຍຫຍໍ້ກ່ຽວກັບ ທິດທາງນະໂຍບາຍການຄຸ້ມຄອງໜີ້ສິນ ຂອງ ສປປ ລາວ ຮອດປີ 2030 ທີ່ນຳສະເໜີ ໂດຍທ່ານ ນ. ຟອງຈິນດາ ແສງສຸລິວົງ ຫົວໜ້າກົມນະໂຍບາຍເງິນຕາ.

ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນໂດຍຜູ້ເຂົ້າຮ່ວມຈາກທຸກພາກສ່ວນໄດ້ເປັນເຈົ້າການປະກອບຄຳຄິດຄຳເຫັນກັນຢ່າງກົງໄປກົງມາ, ເຮັດໃຫ້ກອງປະຊຸມໄດ້ຮັບໝາກຜົນຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

ຂ່າວ ແລະ ພາບ: ຫ້ອງການ ທຫລ

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**